# ບົດບັນທຶກຄວາມເຂົ້າໃຈ

ລະຫວ່າງ

ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ ແຫ່ງ
ສາທາລະນະລັດ ສະຫະພາບມຽນມາ

ແລະ

ສຳນັກງານຂໍ້ມູນຕ້ານການຟອກເງິນ, ຄະນະກຳມະການແຫ່ງ
ຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່
ການກໍ່ການຮ້າຍ ແຫ່ງ ສປປ ລາວ

ວ່າດ້ວຍ

ການຮ່ວມມືໃນການແລກປ່ຽນຂໍ້ມູນຂ່າວສານ ດ້ານການເງິນທີ່
ພົວພັນກັບ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່
ການຮ້າຍ.

**ບົດບັນທຶກຄວາມເຂົ້າໃຈ**

**ລະຫວ່າງ**

**ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ ແຫ່ງ ສາທາລະນະລັດ ສະຫະພາບມຽນມາ**

**ແລະ**

**ສຳນັກງານຂໍ້ມູນຕ້ານການຟອກເງິນ, ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຫ່ງ ສປປ ລາວ**

**ວ່າດ້ວຍ**

**ການຮ່ວມມືໃນການແລກປ່ຽນຂໍ້ມູນຂ່າວສານ ດ້ານການເງິນທີ່ພົວພັນກັບ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.**

ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ ແຫ່ງ ສາທາລະນະລັດ ສະຫະພາບມຽນມາ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ, ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຫ່ງ ສປປ ລາວ, ຊຶ່ງຕໍ່ໄປນີ້ເອີ້ນວ່າ "ຝ່າຍ" ຫຼື ເອີ້ນຮ່ວມກັນວ່າ "ສອງຝ່າຍ".

ໂດຍມີຈຸດປະສົງ ໃນການຮ່ວມມື ແລະ ມີຜົນປະໂຫຍດຮ່ວມກັນ, ເພື່ອອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນຂ່າວກອງເພື່ອຊ່ວຍໃນການສືບສວນ-ສອບສວນ ທີ່ພົວພັນກັບການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການກໍ່ອາຊະຍາກຳທີ່ຕິດພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃຕ້ຂອບເຂດທີ່ສອດຄ່ອງກັບກົດໝາຍພາຍໃນ ແລະ ພັນທະສາກົນຂອງປະເທດຕົນ.

ທັງສອງຝ່າຍຈຶ່ງໄດ້ຕົກລົງກັນດັ່ງຕໍ່ໄປນີ້:

1. (ກ) ພາຍໃຕ້ຂອບເຂດທີ່ໄດ້ຮັບອະນຸຍາດທີ່ສອດຄ່ອງກັບກົດໝາຍພາຍໃນ ແລະ ພັນທະສາກົນຂອງປະເທດຕົນ, ແລະ ສອດຄ່ອງກັບຂັ້ນຕອນ ແລະ ນະໂຍບາຍຂອງປະເທດຕົນ, ຊຶ່ງແຕ່ລະຝ່າຍຈະສະໜອງຂໍ້ມູນໂດຍການຮ້ອງຂໍຈາກອີກຝ່າຍ ຫຼື ໂດຍດຸນພິນິດຂອງແຕ່ລະຝ່າຍໃນການສະໜອງຂໍ້ມູນ (ລວມທັງຂໍ້ມູນການລາຍງານທຸລະກຳທາງດ້ານການເງິນ) ໃນນັ້ນລວມທັງຂໍ້ມູນທີ່ພົວພັນກັບທຸລະກຳທາງດ້ານການເງິນທີ່ສົງໄສວ່າກຳລັງມີການດຳເນີນການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກິດຈະກຳທີ່ກ່ຽວ ຂ້ອງກັບການກໍ່ອາຊະຍາກຳທີ່ຕິດພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ທຸກໆການຮ້ອງຂໍຂໍ້ມູນແມ່ນຈະຕ້ອງມີຄວາມກະທັດຮັດບົນພື້ນຖານຂອງຄວາມເປັນຈິງ ແລະ ມີຈຸດປະສົງໃນການຮ້ອງຂໍຂໍ້ມູນຢ່າງເປັນລາຍລັກອັກສອນ.

1 (ຂ) ການແລກປ່ຽນຂໍ້ມູນລະຫວ່າງສອງຝ່າຍຈະຕ້ອງເປັນຂໍ້ມູນຂ່າວກອງຕາມຈຸດປະສົງ ແລະ ບໍ່ຄວນນຳໃຊ້ຂໍ້ມູນຫຼັກຖານໃດໆຈາກ ການດຳເນີນຄະດີຂອງສານມາເປັນຂໍ້ມູນໃນການແລກປ່ຽນ.

2. (ກ) ການນຳໃຊ້ຂໍ້ມູນ ແລະ ການເປີດເຜີຍຂໍ້ມູນ ທີ່ໄດ້ຮັບຂອງຝ່າຍຮ້ອງຂໍຂໍ້ມູນ (ລວມທັງການເປີດເຜີຍຂໍ້ມູນທາງດ້ານບໍລິຫານ, ໄລຍະການ ຫຼື ການດຳເນີນພິຈາລະນາຄະດີ) ນອກເໜືອຈາກ ຈຸດປະສົງທີ່ໄດ້ກ່າວໄວ້ໃນຂໍ້ທີ 2(ກ) ແລ້ວແມ່ນຖືວ່າເປັນຂໍ້ຫ້າມ ໂດຍບໍ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກຝ່າຍທີ່ສະໜອງຂໍ້ມູນໃຫ້.

3. ການແລກປ່ຽນຂໍ້ມູນລະຫວ່າງສອງຝ່າຍຈະຕ້ອງເປັນຂໍ້ມູນຂ່າວກອງຕາມຈຸດປະສົງ ແລະ ບໍ່ຄວນນຳໃຊ້ຂໍ້ມູນຫຼັກຖານໃດໆຈາກ ການດຳເນີນຄະດີຂອງສານມາເປັນຂໍ້ມູນໃນການແລກປ່ຽນ.

4. ການໄດ້ຮັບຂໍ້ມູນໂດຍອີງຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້ ແມ່ນຈະຮັກສາເປັນຄວາມລັບ, ຊຶ່ງຕ້ອງຮັກສາຄວາມລັບຢ່າງເປັນທາງການ ແລະ ຈະຖືກຄຸ້ມຄອງໂດຍລະບຽບການຮັກສາຄວາມລັບໃນລັກສະນະດຽວກັນກັບການຮັກສາແຫຼ່ງຂໍ້ມູນພາຍໃນປະເທດຂອງປະເທດຕົນ.

5. ທັງສອງຝ່າຍຈະຕ້ອງຮ່ວມມືກັນ ກຳນົດຂັ້ນຕອນໃນການຕິດຕໍ່ພົວພັນທີ່ທັງສອງຝ່າຍສາມາດຮັບໄດ້ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍພາຍໃນຂອງປະເທດຕົນ.

6. ການຕິດຕໍ່ພົວພັນລະຫວ່າງສອງຝ່າຍແມ່ນຈະນຳໃຊ້ພາສາອັງກິດເປັນພາສາທາງການ.

7(ກ). ຖ້າຫາກ ຝ່າຍໃດໜຶ່ງຮ້ອງຂໍ້ມູນ ທີ່ກຳລັງມີການດຳເນີນຄະດີ ຫຼື ກ່ຽວຂ້ອງກັບການດຳເນີນທາງດ້ານກົດໝາຍ, ຊຶ່ງມີຄວາມຈຳເປັນຕ້ອງໄດ້ເປີດເຜີຍຂໍ້ມູນທີ່ໄດ້ຮັບຈາກຝ່າຍໃດໜຶ່ງໃຫ້ກັບພາກສ່ວນກ່ຽວຂ້ອງ, ຝ່າຍທີ່ຮ້ອງຂໍຂໍ້ມູນດັ່ງກ່າວຈະຕ້ອງໄດ້ແຈ້ງໃຫ້ຝ່າຍສະໜອງຂໍ້ມູນໃຫ້ ເພື່ອຊາບໂດຍທັນທີ.

7(ຂ). ໃນກໍລະນີທີ່ຝ່າຍໃດໜຶ່ງມີວັດຖຸປະສົງທີ່ຈະເປີດເຜີຍຂໍ້ມູນດັ່ງທີ່ໄດ້ລະບຸໄວ້ໃນຂໍ້ທີ 7(ກ), ຝ່າຍໃດໜຶ່ງຈະຕ້ອງໃຫ້ເຫດຜົນຢ່າງພຽງພໍເພື່ອໃຫ້ແນ່ໃຈວ່າຂໍ້ມູນດັ່ງກ່າວຈະບໍ່ຖືກເປີດເຜີຍໃຫ້ພາກສ່ວນທີ່ສາມ ຫຼື ເປີດເຜີຍຂໍ້ມູນຢ່າງຈຳກັດໃຫ້ພາກສ່ວນທີ່ເໝາະສົມ.

8. ທັງສອງຝ່າຍ ແມ່ນບໍ່ຢູ່ພາຍໃຕ້ເງື່ອນໄຂໃຫ້ການຊ່ວຍເຫຼືອ ຖ້າຫາກວ່າພວກເຂົາກວດສອບເຫັນວ່າການເປີດເຜີຍຂໍ້ມູນ ຫຼື ການຮ້ອງຂໍຂໍ້ມູນບໍ່ເໝາະສົມທີ່ອາດມີຜົນກະທົບ ຫຼື ເປັນອຸປະສັກຕໍ່ການສືບຫາຂໍ້ມູນ, ການສືບສວນ-ສອບສວນ ຫຼື ການດຳເນີນຄະດີໃດໜຶ່ງໃນປະເທດຂອງຝ່າຍຖືກຮ້ອງຂໍຂໍ້ມູນ, ຖ້າຫາກການໃຫ້ຂໍ້ມູນດັ່ງກ່າວເປັນຂໍ້ຫ້າມທີ່ມີລັກສະນະກະທົບຕໍ່ອະທິປະໄຕ, ຄວາມໝັ້ນຄົງຜົນປະໂຫຍດລວມຂອງຊາດ ຫຼື ຜົນປະໂຫຍດທີ່ຈຳເປັນອື່ນໆຂອງຝ່າຍຖືກຮ້ອງຂໍ. ຖ້າຝ່າຍໃດໜຶ່ງຕັດສິນໃຈທີ່ຈະບໍ່ສະໜອງຂໍ້ມູນໃຫ້, ຝ່າຍທີ່ຖືກຮ້ອງຂໍຂໍ້ມູນ ຈະຕ້ອງໄດ້ແຈ້ງໃຫ້ຝ່າຍທີ່ຮ້ອງຂໍຂໍ້ມູນ ຊາບເຖິງເນື້ອໃນຈົດໃຈທີ່ບໍ່ສາມາດສະໜອງຂໍ້ມູນດັ່ງກ່າວໃຫ້ໄດ້.

9. ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນການຕີຄວາມໝາຍ ຫຼື ການປະຕິບັດບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະຕ້ອງຖືກແກ້ໄຂແບບເພື່ອນມິດ ໂດຍຜ່ານການປຶກສາຫາລື ຫຼື ການເຈລະຈາ ລະຫວ່າງຄູ່ສັນຍາທັງສອງຝ່າຍ.

10. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ອາດມີການປ່ຽນແປງໄດ້ຕະຫຼອດເວລາຂຶ້ນຢູ່ກັບການຕົກລົງເຫັນດີຈາກທັງສອງຝ່າຍຢ່າງເປັນລາຍລັກອັກສອນ ແລະ ຈະເປັນສ່ວນໜຶ່ງຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້. ການປ່ຽນແປງດັ່ງກ່າວຈະມີຜົນສັກສິດນັບແຕ່ມື້ທັງສອງໄດ້ກຳນົດຢ່າງເປັນລາຍລັກອັກສອນ.

11. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ແມ່ນສາມາດຍົກເລີກໄດ້ຕະຫຼອດເວລາ. ການດຳເນີນການຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະຍົກເລີກທັນທີເມື່ອໄດ້ຮັບການແຈ້ງເພື່ອຍົກເລີກຢ່າງເປັນລາຍລັກອັກສອນຈາກຝ່າຍໃດ

ຝ່າຍໜຶ່ງ. ຂໍ້ກຳນົດ ແລະ ເງື່ອນໄຂໃນຂໍ້ທີ 2 ຫາ 5 ແລະ 7 ຈະຍັງສືບຕໍ່ມີຜົນສັກສິດເຖິງວ່າບົດບັນທຶກຄວາມເຂົ້າໃຈສະບັບນີ້ຈະຖືກຍົກເລີກແລ້ວກໍ່ຕາມ, ກໍ່ຄືຂໍ້ມູນທີ່ກ່ຽວຂ້ອງທີ່ໄດ້ຮັບກ່ອນໜ້າການຍົກເລີກ ບົດບັນທຶກຄວາມເຂົ້າໃຈສະບັບນີ້.

12. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ່ທັງສອງຝ່າຍໄດ້ລົງລາຍເຊັນເປັນຕົ້ນໄປ.

13. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ແມ່ນບໍ່ມີເຈດຕະນາສ້າງຂໍ້ຜູກມັດທາງດ້ານກົດໝາຍ ລະຫວ່າງທັງສອງຝ່າຍ, ເຊັ່ນດຽວກັບການກໍ່ໃຫ້ເກີດພັນທະ ແລະ ເງື່ອນໄຂ ທາງດ້ານກົດໝາຍ.

ເຊັນທີ່..ເນປີດໍ..ເປັນສອງສະບັບ, ແຕ່ລະສະບັບເປັນພາສາລາວ, ພາສາມຽນມາ ແລະ ພາສາອັງກິດ ທຸກສະບັບມີມູນຄ່າເທົ່າທຽມກັນ, ໃນກໍລະນີທີ່ມີຄວາມແຕກຕ່າງກັນ ໃນການແປຄວາມໝາຍຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້, ພາສາອັງກິດຈະໃຊ້ເປັນບ່ອນອີງ.

( 23 / 7 / 2018 )

ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ ແຫ່ງສາທາລະນະລັດ ສະຫະພາບມຽນມາ

ທ່ານ ອູ.ວ Kyaw Win Thein
ຫົວໜ້າໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ

( 23 / 07 / 18 )

ສຳນັກງານຂໍ້ມູນຕ້ານການຟອກເງິນ, ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຫ່ງ ສປປ ລາວ.

ທ່ານ ນ. ແພງສີ ແພງເມືອງ
ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ